San Diego City Schools

**Fact Sheet**

ລະດູໃບໄມ້ລົ່ນ 2005

# ໂຄງການສຶກສາເລີ້ມຕົ້ນຂອງວັຍເດັກ

ກົດໝາຍຣັຖບານຣັຖຮຽກຮ້ອງໃຫ້ນັກຮຽນທຸກໆຄົນອາຍຸຕໍ່າກວ່າ 18 ປີ, ແຕ່ຊັ້ນຮຽນກຽມອະນຸບານເຖິງຊັ້ນຮຽນປີທີ 12, ໃຫ້ມີການສັກຢາກັນເຊື້ອໂຣຄຕ່າງໆ ນອກຈາກເຂົາເຈົ້າມີຂໍ້ຍົກເວັ້ນທີ່ມີເຫດຜົນດ້ານການໃຊ້ຢາ ຫລື ຍ້ອນການເຊື່ອຖືສ່ວນຕົວ. ໃນເວລາຈົດຊື່ເຂົ້າໂຮງຮຽນ, ທາງໂຮງຮຽນໄດ້ຮຽກຮ້ອງເອົາຫລັກຖານໃຫມ່ໆທີ່ເດັກຂອງທ່ານໄດ້ສັກຢາກັນເຊື້ອໂຣຄນັ້ນ.

ຜແນກກັບກຳການມາເຂົ້າໂຮງຮຽນຮຽກຮ້ອງໃຫ້ສັກຢາກັນເຊື້ອໂຣຄນັ້ນມີ:

- Polio–ປ້ອງກັນໂຣຄເປ້ຍລ່ອຍ ສັກສີ່ຄັ້ງ (ສັກປົນກັບ IPV ຫລື OPV); 3 ເທື່ອກໍ່ໄດ້, ຖ້າສັກຄັ້ງສຸດທ້າຍຫລັງຈາກວັນເກີດປີທີສີ່ ຂອງພວກເດັກອາຍຸ 4–6 ປີ. 3 ຄັ້ງຈຶ່ງຄົບຕາມຂໍ້ຮຽກຮ້ອງສຳຫລັບພວກເດັກອາຍຸ 7–17 ຖ້າວ່າຢ່າງນ້ອຍໄດ້ສັກຄັ້ງນຶ່ງແລ້ວໃນວັນເກີດ ຫລື ຫລັງຈາກວັນເກີດປີທີ 2 ຂອງເດັກ.
- DTP/DTap-(diphtheria, tetanus, and Pertussis) ປ້ອງກັນໂຣຄຄໍຕີບ, ໂຣຄບາດທະຍັກ ແລະ ໂຣຄໄອຫອບ ສັກກ່ອນອາຍຸ 7 ປີ, ຫ້າຄັ້ງ; ສີ່ຄັ້ງຈຶ່ງຄົບຕາມຂໍ້ຮຽກຮ້ອງສຳຫລັບພວກເດັກອາຍຸ 4–6 ຖ້າວ່າຢ່າງນ້ອຍໄດ້ສັກຄັ້ງນຶ່ງແລ້ວໃນວັນເກີດ ຫລື ຫລັງຈາກວັນເກີດປີທີສີ່ ຂອງເດັກ.
- Hip-(Haemophilus influenza type b) ປ້ອງກັນເຊື້ອໂຣຄສມອງອັກເສບ ຮຽກຮ້ອງກັບເດັກອາຍຸຕໍ່າກວ່າສີ່ປີ, ຫົກເດືອນ.
- TD–(tetanus diphtheria ປ້ອງກັນໂຣຄບາດທະຍັກ, ໂຄງຄໍຕີບ ສຳຫລັບອາຍຸ ເຈັດປີ ແລະ ສູງຂຶ້ນໄປ)–ສີ່ຄັ້ງ, ແຕ່ວ່າ ສາມຄັ້ງກໍ່ຄົບຂໍ້ຮຽກຮ້ອງສຳຫລັບພວກເດັກອາຍຸ 7–17 ຖ້າວ່າຢ່າງນ້ອຍໄດ້ສັກຄັ້ງນຶ່ງແລ້ວໃນວັນເກີດ ຫລື ຫລັງຈາກວັນເກີດປີທີສອງ ຂອງເດັກ.

### ຂໍ້ສລູບ

ຣັຖຄາລີຟໍເນັຍຮຽກຮ້ອງໃຫ້ນັກຮຽນທຸກໆຄົນອາຍຸຕໍ່າກວ່າ 18 ປີ, ແຕຊັ້ນຮຽນກຽມ–ອະນຸບານເຖິງປີທີ 12, ຕ້ອງໄດ້ສັກຢາກັນໂຣຄ:

- ❖ ປ້ອງກັນໂຣຄ ເປ້ຍລ່ອຍ (Polio)
- ❖ ປ້ອງກັນໂຣຄຄໍຕີບ, ບາດທະຍັກ, ແລະ ໄອຫອບ (Diphtheria, Tetanus, and Pertussis)
- ❖ ປ້ອງກັນເຊື້ອໂຣຄສມອງອັກເສບ (Haemophilus infleuenza type b)
- ❖ ປ້ອງກັນໂຣຄບາດທະຍັກ, ໂຣຄຄໍຕີບ (Tetnus, Diphtheria)
- ❖ ປ້ອງກັນໂຣຄໄຂ້ອອກຕຸ່ມ, ໂຣຄຄາງໄດ່ ແລະ ໂຣຄໄຂ້ອອກຕຸ່ມ ຣູເບັລລາ (Measles, Mumps, Rubella)
- ❖ ປ້ອງກັນໂຣຄໄຂ້ອອກຕຸ່ມໝາກສຸກໝາກໃສ (Chicken pox).

- MMR-(measles, mumps, rubeela ປ້ອງກັນໂຣຄໄຂ້ອອກຕຸ່ມ, ໂຣຄຄໍໄດ່, ໂຣຄໄຂ້ອອກຕຸ່ມຣູເບັລລາ) ສັກຄັ້ງນຶ່ງໃນວັນເກີດ ຫລື ຫລັງຈາກວັນເກີດປີທີນຶ່ງ ສຳຫລັບພວກເດັກທີ່ເຂົ້າຮຽນຊັ້ນອະນຸບານກ່ອນວັນທີ 1 ສິງຫາ 1997. ສອງຄັ້ງສຳຫລັບພວກນັກຮຽນທຸກໆຄົນທີ່ຈະເຂົ້າຮຽນຊັ້ນອະນຸບານ ແລະ ຊັ້ນຮຽນປີທີນຶ່ງ ທີ່ບໍ່ໄດ້ເຂົ້າຊັ້ນອະນຸບານຢູ່ໃນຣັຖຄາລີຟໍເນັຍ ແລະ/ຫລື ບໍ່ໄດ້ສັກຢາ MMR ເທື່ອທີສອງ. ສັກ MMR ເທື່ອທີສອງນີ້ ແມ່ນຮຽກຮ້ອງສຳຫລັບຜູ້ທີ່ຈະເຂົ້າຮຽນປີທີ 7. ອົງການ Americak Academy of Pediatrics ໄດ້ແນະນຳໃຫ້ສັກ MMR ເທື່ອທີສອງ ໃຫ້ເດັກທຸກໆຄົນ.
- Hepatitis B–ປ້ອງກັນໂຣຄຕັບອັກເສບຊະນິດ ບີ, ສັກສາມຄັ້ງຕອນເຂົ້າຮຽນຊັ້ນອະນຸບານ ແລະ ຊັ້ນຮຽນປີທີນຶ່ງ ສຳຫລັບຜູ້ບໍ່ໄດ້ເຂົ້າຊັ້ນອະນຸບານຢູ່ໃນຣັຖຄາລີຟໍເນັຍ ແລະ/ຫລື ບໍ່ໄດ້ສັກກັນໂຣຄຕັບອັກເສບຊະນິດ ບີ ເຕັມຊຸດ. ການສັກຢາປ້ອງກັນໂຣຄຕັບອັກເສບນີ້ ແມ່ນຮຽກສຳຫລັບພວກຈະເຂົ້າປີທີ 7.
- Chicken pox–(ປ້ອງກັນໂຣຄໄຂ້ອອກຕຸ່ມໝາກສຸກໝາກໃສ) ສັກນຶ່ງ (1) ຄັ້ງ ສຳຫລັບ ເຂົ້າຊັ້ນອະນຸບານ ຫລື ຢັ້ງຢືນປວັດເປັນມາຂອງພຍາດ. ພວກນັກຮຽນຈາກຣັຖອື່ນທີ່ມາເຂົ້າຊັ້ນປີທີ 1–12 ຕ້ອງໄດ້ມີຫລັກຖານຢັ້ງຢືນການສັກຢາກັນໂຣຄ Chicken pox ຫລື ເອກະສານການເປັນມາຂອງພຍາດ. ສອງ (2) ຄັ້ງ ຮຽກຮ້ອງໃຫ້ສັກໃນວັນເກີດ ຫລື ຫລັງຈາກວັນເກີດປີທີ 13 ຂອງເດັກ.
- ກະຣຸນາກວດເບິ່ງກັບທ່ານໝໍປົວເດັກ, ທ່ານໝໍປະຈຳຄອບຄົວຂອງທ່ານ, ຫລື ຫ້ອງການຮັກສາສຸຂພາບຕ່າງໆ ເພື່ອໃຫ້ແນ່ໃຈວ່າເດັກຂອງທ່ານໄດ້ສັກຢາກັນໂຣຄຄົບຖ້ວນທຸກຊະນິດແລ້ວ. ຖ້າບໍ່ມີຫລັກຖານຄົບຖ້ວນຕາມທີ່ບົ່ງໄວ້ນີ້ ເດັກຂອງທ່ານອາດຈະບໍ່ໄດ້ເຂົ້າໂຮງຮຽນ. ລາຍລະອຽດກ່ຽວກັບການຍົກເວັ້ນໃນເຫດຜົນທີ່ມີພຍາດ ຫລື ການເຊື່ອຖືສ່ວນຕົວນັ້ນ ມີໄວ້ໃຫ້ ຢູ່ໃນຫ້ອງການແພທປະຈຳໂຮງຮຽນ. ແພທປະຈຳໂຮງຮຽນອາດສາມາດສັກຢາໃຫ້ນັກຮຽນຢູ່ກັບໂຮງຮຽນ ຖ້າອະນຸຍາດຈາກພໍ່ແມ່.

*ອະພິບັທະນາການຕໍ່າພິມຈາກມູນນິທິ Annie E. Casey Foundation*


ເພື່ອລາຍລະອຽດຕິດຕໍ່ຫາ: **Nursing and Wellness Program: (858) 627-7580**
**Media inquires: (619) 725-5578**

**www.sandi.net**
*revised 10/03/05*


ບໍຣິການຊ່ວຍເຫລືອນັກຮຽນຫລາຍກວ່າ 136,000 ຄົນ, ສູນກາງສຶກສາແຊນດິເອໂກເປັນສູນກາງໃຫຍ່ທີ່ສຸດທີສອງໃນຣັຖຄາລີຟໍເນັຍ, ມີໂຮງຮຽນຫລາຍກວ່າ 202 ແຫ່ງ ແລະ ມີພະນັກງານຫລາຍກວ່າ 14,500 ຄົນ ທີ່ທຽບເທົ່າຕຳແໜ່ງເຕັມເວລາ (ຊຶ່ງເປັນຕົວແທນໃຫ້ຈຳນວນພະນັກງານຫລາຍກວ່າ 15,800 ຄົນ.) ສູນກາງສຶກສາແຊນດິເອໂກໄດ້ປັບປຸງຄວາມສຳເຣັດຂອງນັກຮຽນ ໂດຍຫານການເນັ້ນໜັກໃສ່ພື້ນຖານການສຶກສາດ້ານວິຊາອ່ານ, ວິຊາຂຽນ ແລະ ວິຊາເລກໃນຊັ້ນຮຽນກຽມອະນຸບານເຖິງປີທີ 12. ສູນກາງສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ ແລະ ສົ່ງເສີມສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສໄມ ແລະ ດຳເນີນງານຫານການພົວພັນພໍ່ແມ່, ຄຣູອາຈານ, ແລະ ຊຸມຊົນ.

"ພາລະໜ້າທີ່ຂອງໂຮງຮຽນສູນກາງສຶກສາແຊນດິເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.